ສະບັບທີ 16.02.2018

**ບົດຮັບຄຳໂອ້ລົມຂອງທ່ານນາຍົກ**
**ຂອງ ທ່ານ ລັດຖະມົນຕີກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ**

**ຮຽນ: ທ່ານ ທອງລຸນ ສີສຸລິດ, ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ທີ່ເຄົາລົບ ແລະ ນັບຖືເປັນຢ່າງສູງ !**

- **ບັນດາຜູ້ແທນກອງປະຊຸມ ທີ່ນັບຖື ແລະ ຮັກແພງ !**

ກອງປະຊຸມ ຖວທ ທົ່ວປະເທດໃນມື້ນີ້ ໄດ້ຮັບກຽດຢ່າງສູງ ທີ່ໄດ້ຕ້ອນຮັບທ່ານນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ທີ່ໄດ້ໃຫ້ກຽດມາໂອ້ລົມຕໍ່ຜູ້ແທນກອງປະຊຸມ, ຊຶ່ງສະແດງໃຫ້ເຫັນເຖິງຄວາມເປັນຫ່ວງເປັນໄຍ ແລະ ຄວາມເອົາໃຈໃສ່ຂອງລັດຖະບານ ຕໍ່ຂະແໜງການ ຖວທ ພວກເຮົາ. ຂ້າພະເຈົ້າຂໍຕາງໜ້າໃຫ້ແກ່ພະນັກງານລັດຖະກອນທົ່ວຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ແຕ່ສູນກາງຮອດທ້ອງຖິ່ນ ຂໍສະແດງຄວາມຂອບອົກຂອບໃຈຢ່າງເລິກເຊິ່ງມາຍັງທ່ານ ກໍ່ຄືການນຳຂັ້ນສູງຂອງພັກ ແລະ ລັດທີ່ຍາມໃດກໍ່ມີຄວາມເປັນຫ່ວງເປັນໄຍ ແລະ ເອົາໃຈໃສ່ໃກ້ຊິດຕິດແທດຊີ້ນຳ-ນຳພາຕະຫລອດມາ ອັນໄດ້ເຮັດໃຫ້ວຽກງານຖະແຫລງຂ່າວ,ວັດທະນະທຳ ແລະທ່ອງທ່ຽວ ນັບມື້ນັບເຕີບໃຫຍ່ເຂັ້ມແຂງເທື່ອລະກ້າວ.

ການໂອ້ລົມຂອງທ່ານນາຍົກລັດຖະມົນຕີທີ່ຜ່ານໄປນັ້ນ ເຕັມໄປດ້ວຍເນື້ອໃນອັນເລິກເຊິ່ງ ແລະ ມີຄຸນປະໂຫຍດອັນໃຫຍ່ຫຼວງ, ຊີ້ທິດເຍືອງທາງໃຫ້ຜູ້ເຂົ້າຮ່ວມກອງປະຊຸມໄດ້ເຂົ້າໃຈແຈ້ງຕື່ມເຖິງທັດສະນະແນວທາງຂອງພັກ ຕໍ່ຂົງເຂດວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ໄດ້ເປັນພະລັງອັນແຮງກ້າໃຫ້ພວກເຮົາທັງໝົດພ້ອມກັນຕັດສິນໃຈຜ່ານຜ່າຄວາມຫຍຸ້ງຍາກຕ່າງໆ ນາໆ ປັບປຸງແກ້ໄຂຂໍ້ຄົງຄ້າງຕ່າງໆ ສືບຕໍ່ກ້າວຂຶ້ນເຮັດລ້ອນໜ້າທີ່ອັນມີອັນມີກຽດສະຫງ່າຂອງຕົນໃນການພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ມີບາດກ້າວໃໝ່, ມີຜົນງານໃໝ່ອັນໃຫຍ່ຫຼວງກວ່າເກົ່າ.

ໃນໂອກາດອັນສະຫງ່າລາສີນີ້ ພວກເຮົາຂໍໃຫ້ຄຳໝັ້ນສັນຍາຕໍ່ທ່ານນາຍົກລັດຖະມົນຕີວ່າ: ຄະນະນຳກະຊວງ ຖວທ ກໍ່ຄືຜູ້ແທນກອງປະຊຸມ ແລະ ພະນັກງານລັດຖະກອນທົ່ວຂະແໜງການ ຖວທ ທຸກທົ່ວໜ້າ ຈະຂໍນຳເອົາເນື້ອໃນຈິດໃຈການໂອ້ລົມຂອງທ່ານໄປຄົ້ນຄວ້າເຊື່ອມຊຶມ ແລະ ຈັດຕັ້ງຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງຢ່າງມີປະສິດທິຜົນ ແລະ ໃຫ້ປະສົບຜົນສຳເລັດຢ່າງຈົບງາມ.

ອີກເທື່ອໜຶ່ງກອງປະຊຸມຂອງພວກເຮົາ ຂໍສະແດງຄວາມຮູ້ບຸນຄຸນຢ່າງສູງ ຕໍ່ທ່ານນາຍົກລັດຖະມົນຕີທີ່ໃຫ້ກຽດມາພົບປະໂອ້ລົມຕໍ່ກອງປະຊຸມພວກເຮົາຄັ້ງນີ້, ຂໍອວຍໄຊໃຫ້ພອນແກ່ທ່ານນາຍົກລັດຖະມົນຕີຈົ່ງມີສຸຂະພາບເຂັ້ມແຂງ, ປະສົບຜົນສຳເລັດໃນໜ້າທີ່ວຽກງານອັນສູງສົ່ງຂອງທ່ານ ແລະ ມີຄວາມສຸກຄວາມຈະເລີນຕະຫຼອດໄປ.

**"ຂໍຂອບໃຈ"**